**ຜົນປະໂຍດກ່ຽວກັບຢາປົວພະຍາດທີ່ທ່ານໝໍສັ່ງແບບໃໝ່ຂອງ Medicare ຈະເລີ່ມຕົ້ນໃນວັນທີ 1 ມົກກະຣາ 2006**

# ການຊ່ວຍເຫລືອ ແລະຂ່າວສານກໍມີໄວ້ໃຫ້:

## ໂທຣະສັບຫາ 1-800-MEDICARE * ຜູ້ໃຊ້ TTY, ໂທຣະສັບຫາ 1-877-486-2048

## ທ່ານຍັງສາມາດຕິດຕໍ່ຫາທີ່ປຶກສາຂອງ HICAP ໄດ້ທີ່ເລກ 1-800-434-0222 ນຳອີກດ້ວຍ.

## ເຣີ່ມຕົ້ນແຕ່ວັນທີ 1 ມົກກະຣາ 2006 ເປັນຕົ້ນໄປ, ການຄຸ້ມຄອງຢາປົວພະຍາດຂອງທ່ານຈະປ່ຽນແປງ.

ທ່ານຕ້ອງເຂົ້າຮ່ວມໃນແຜນຢາປົວພະຍາດທີ່ທ່ານໝໍສັ່ງຂອງ Medicare

ເພື່ອທີ່ຈະໄດ້ຮັບການຄຸ້ມຄອງຢາທີ່ທ່ານໝໍສັ່ງ.

## □MEDI-CAL ຈະບໍ່ຄຸ້ມຄອງຢາປົວພະຍາດທີ່ທ່ານໝໍສັ່ງອີກຕໍ່ໄປ□

ຖ້າຫາກທ່ານຢູ່ໃນ Medi-Cal ແລະ Medicare ທີ່ບໍ່ເສັຍຄ່າ, ທ່ານກໍຈະໄດ້ຮັບການຊ່ວຍເຫລືອເພີ່ມເຕີມໂດຍອັດຕະໂນມັດຜ່ານ Medicare ເພື່ອຊ່ວຍຈ່າຍຄ່າທຳນຽມ ແລະສ່ວນລົດສຳຫລັບປີ 2006 ທັງໝົດ. ທ່ານຈະຈ່າຍຄ່າຈ່າຍຮ່ວມຈາກ $1 ຫາ $5 ສຳຫລັບຢາທີ່ທ່ານໝໍສັ່ງແຕ່ລະເທື່ອທີ່ທ່ານໄດ້ຮັບ. ຖ້າຫາກທ່ານຢູ່ໃນສະຖານເບິ່ງແຍງຄົນເຈັບ, ທ່ານຈະບໍ່ໄດ້ຈ່າຍຫຍັງຈັກຢ່າງ.

ໃນເດືອນຕຸລາ, ແຜນສຳຫລັບຢາທີ່ທ່ານໝໍສັ່ງຈະເຣີ່ມຕົ້ນການໂຄສະນາ. Medicare ຈະເອົາທ່ານເຂົ້າໃນແຜນໂດຍອັດຕະໂນມັດ ແລະຈະສົ່ງຈົດໝາຍຂ່າວສານມາໃຫ້ທ່ານເພື່ອບອກໃຫ້ທ່ານຮູ້ກ່ຽວກັບແຜນຢາປົວພະຍາດໃໝ່ຂອງທ່ານ. ຖ້າຫາກທ່ານໄດ້ຮັບການຊ່ວຍເຫລືອແຕ່ຄ່າໃຊ້ຈ່າຍ Medicare ເທົ່ານັ້ນ, ເວລານັ້ນ ທ່ານກໍຈະໄດ້ຈົດຊື່ເຂົ້າໃນແຜນ ເພື່ອໄດ້ຮັບຢາປົວພະຍາດທີ່ທ່ານໝໍສັ່ງໃນວັນທີ 1 ມົກກະຣາ 2006. ເຣີ່ມຕົ້ນແຕ່ວັນທີ 15 ພຶດສະຈິກາ 2005 ເປັນຕົ້ນໄປ, ທ່ານອາດຈະປ່ຽນແປງ ຫລືຈົດຊື່ເຂົ້າໃນແຜນຢາປົວພະຍາດກໍໄດ້ ດ້ວຍການໂທຣະສັບໄປຫາແຜນທີ່ທ່ານຢາກຈະເຂົ້າຮ່ວມນຳ ແລະພວກເພິ່ນກໍຈະຊ່ວຍເຫລືອທ່ານ. ຈົ່ງເກັບຂ່າວສານທັງໝົດຂອງທ່ານໄວ້ນຳກັນບ່ອນດຽວ.

**ສຳຫລັບການເລືອກເອົາແຜນກ່ຽວກັບຢາປົວພະຍາດທີ່ທ່ານໝໍສັ່ງຂອງ Medicare:**

- ໃຫ້ຖາມຮ້ານຂາຍຢາວ່າແຜນໃດທີ່ພວກເພິ່ນຮັບເອົາ.
- ໃຫ້ໂອ້ລົມກັບທ່ານໝໍຂອງທ່ານວ່າ ແຜນໃດໃຊ້ໄດ້ດີທີ່ສຸດກັບຢາປົວພະຍາດທີ່ທ່ານກິນຢູ່.
- ໂທຣະສັບຫາທີ່ປຶກສາຂອງ HICAP ທີ່ Medicare ໄດ້ທີ່ເລກ 1-800-434-0222. ທີ່ປຶກສາສາມາດຊ່ວຍເຫລືອທ່ານເລືອກເອົາແຜນຢາປົວພະຍາດໄດ້.

**ຖ້າຫາກທ່ານເຂົ້າຢູ່ໃນແຜນ Medicare Advantage Plan (HMO)**, ທ່ານກໍຈະໄດ້ຮັບຢາປົວພະຍາດຈາກແຜນຢາປົວພະຍາດນັ້ນ ແລະການຄຸ້ມຄອງແບບດຽວກັນນັ້ນ. Medicare ກໍຈະສົ່ງຈົດໝາຍມາໃຫ້ທ່ານກ່ຽວກັບແຜນຢາປົວພະຍາດໃໝ່ຂອງທ່ານ.

**ຖ້າຫາກທ່ານໄດ້ຮັບການຄຸ້ມຄອງຢາປົວພະຍາດຈາກນາຍຈ້າງທີ່ເປັນຜູ້ຈ່າຍ ຫລືແຜນສຸຂະພາບຈາກກອງທຶນເບັ້ຍບຳນານ**, ໃຫ້ຕິດຕໍ່ກັບນາຍຈ້າງຂອງທ່ານ ຫລືຜູ້ຈັດການກອງທຶນຜົນປະໂຍດເບັ້ຍບຳນານເພື່ອຂໍຂ່າວສານເພີ່ມເຕີມ ວ່າການປ່ຽນແປງນີ້ທີ່ອາດມີຜົນກະທົບຕໍ່ທ່ານແນວໃດ.

**ການຊ່ວຍເຫລືອເພີ່ມເຕີມກໍມີໄວ້ໃຫ້ (ເອີ້ນອີກຊື່ໜຶ່ງວ່າ ການຊ່ວຍຈ່າຍສຳຫລັບຜູ້ມີຣາຍໄດ້ຈຳກັດ)**
ຖ້າຫາກທ່ານມີ Medi-Cal ຮ່ວມກັບການຄ່າໃຊ້ຈ່າຍຮ່ວມ ແລະທ່ານ *ຖືກຕ້ອງ* ກັບທີ່ວ່າ ຄ່າຈ່າຍຮ່ວມໃນເດືອນໃດກໍຕາມຣະຫວ່າງວັນທີ 3/10/05 ແລະວັນທີ 12/31/05, ເວລານັ້ນທ່ານກໍຈະໄດ້ຮັບການຊ່ວຍເຫລືອເພີ່ມເຕີມສຳຫລັບປີ 2006 ໝົດປີໂດຍອັດຕະໂນມັດ. ທ່ານຍັງຈະໄດ້ຖືກຈັດເຂົ້າໃສ່ແຜນຢາປົວພະຍາດທີ່ທ່ານໝໍສັ່ງຂອງ Medicare ໂດຍອັດຕະໂນມັດນຳອີກດ້ວຍ.

ຖ້າຫາກທ່ານມີ Medi-Cal ພ້ອມກັບຄ່າຈ່າຍຮ່ວມ ແລະ *ທ່ານບໍ່ໄດ້ເກັບ* ຄ່າໃຊ້ຈ່າຍຮ່ວມ, ເວລານັ້ນທ່ານກໍຈະຕ້ອງໄດ້ມີແຜນຢາປົວພະຍາດທີ່ທ່ານເລືອກເອົາຈາກ Medicare. ທ່ານສາມາດຮ້ອງຂໍການຊ່ວຍເຫລືອເພີ່ມເຕີມໄດ້ໂດຍທາງໂທຣະສັບ ດ້ວຍການໂທຣະສັບໄປຫາ Social Security ທີ່ເລກ 1-800-772-1213, ຫລືຂໍທາງໄປສະນີໄດ້ທີ່ເລກ 1-800-772-1213. ຫລືຂໍສະມັກຜ່ານອິນເຕີເນັດກໍໄດ້ທີ່: www.socialsecurity.gov/.

LAO